ບົດຂ່າວປະຈຳເດືອນ
ມີນາ -ພຶດສະພາ 2025



# SuPER WE Coffee

## ວຽກເດັ່ນຂອງໂຄງການ
## ມີນາ - ພຶດສະພາ 2025

**ມີນາ:** ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນກາເຟຍິງເຂົ້າຮ່ວມງານເຄືອຂ່າຍການຕະລາດພາຍໃນ

**ເມສາ:** ກຸ່ມຜູ້ຜະລິດກາເຟພູດອຍດາກຈຶງໄດ້ຮັບເຄື່ອງສີກາເຟໃໝ່ຊ່ວຍປັບປຸງການແປຮູບກາເຟ

**ພຶດສະພາ:** ຈັດງານເສວະນາກາເຟເພື່ອແລກປ່ຽນບົດຮຽນການພັດທະນາກາເຟ ໃຫ້ມີຄວາມຍືນຍົງ

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400 ຊາວສວນກາເຟ**

280 ແມ່ຍິງຊົນເຜົ່າ

ທາງອ້ອມ

**4,463 ປະຊາຊົນ**

2,217 ແມ່ຍິງຊົນເຜົ່າ

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ





## ມີນາ

### ສົ່ງເສີມການຝຶກອົບຮົມກ່ຽວກັບການຄຸ້ມຄອງຄຸນະພາບກາເຟຢູ່ຂັ້ນບ້ານ

ວັນທີ 18-20 ມີນາ 2025, ທີມງານໂຄງການນຳພາຄູຝຶກຂັ້ນບ້ານທີ່ໄດ້ຮັບການຝຶກອົບຮົມໃນເດືອນມັງກອນ 2025 ຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງຄຸນະພາບກາເຟຢູ່ຂັ້ນບ້ານ. ການຝຶກອົບຮົມແບ່ງອອກເປັນ 3 ກຸ່ມ ຢູ່ບ້ານ ດາກເອີຍ, ດາກຣາຍ ແລະ ດາກວາງ. ມີຜູ້ເຂົ້າຮ່ວມທັງໝົດ 103 ຄົນ ຈາກ 11 ບ້ານເປົ້າໝາຍ ຂາດບ້ານຄູນໄຊ, ດາກກັງ, ດາກໂດມ ແລະ ດາກວໍ. ຜູ້ເຂົ້າຮ່ວມໄດ້ຮຽນຮູ້ ແລະ ສົນທະນາແລກປ່ຽນເຕັກນິກການຄຸ້ມຄອງຄຸນະພາບກາເຟ ເລີ່ມຈາກການເກັບກ່ຽວໝາກແດງຈົນຮອດການຄັດຂະໜາດ ແລະຄຸນນະພາບໝາກຊ້ອມ.



## ມີນາ

### ສົ່ງເສີມຄວາມສາມາດຂອງຊາວກະສິກອນກາເຟດາກຈຶງດ້ານຫຼັກການສະຫະກອນ: ການເຄື່ອນໄຫວຢ້ຽມຢາມ ແລະແລກປ່ຽນດ້ານເຕັກນິກຄັ້ງທີ 3

ວັນທີ 20-21 ມີນາ 2025, ສຳເລັດຈັດກອງປະຊຸມປຶກສາຫາລືແລກປ່ຽນການສ້າງສະຫະກອນຄັ້ງທີ 3 ໂດຍມີຜູ້ເຂົ້າຮ່ວມທັງໝົດ 51 ທ່ານ, 3 ຂະແໜງການທີ່ກ່ຽວຂ້ອງ 7 ທ່ານ (ຍິງ 2 ທ່ານ) ໃນນັ້ນມີຊາວກະສິກອນກາເຟ 41 ທ່ານ (ຍິງ 22 ທ່ານ) ຈາກ 15 ບ້ານ ແລະ ແຂກພິເສດ ທ່ານ ພູວົງ ຜູ້ຈັດການສະຫະກອນກາເຟຊີວະພາບແບບຍືນຍົງ ແບ່ງປັນແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບສະຫະກອນ. ກອງປະຊຸມຄັ້ງນີ້ ຜູ້ເຂົ້າຮ່ວມໄດ້ປຶກສາ ແລະ ແລກປ່ຽນຜົນກອງປະຊຸມຄັ້ງທີ 2, ເອກະສານ-ນິຕິກຳ ແລະ ຂະບວນການຂໍອະນຸຍາດການສ້າງຕັ້ງເຄື່ອນໄຫວເປັນສະຫະກອນ, ປະສົບການກ່ຽວກັບການບໍລິຫານສະຫະກອນກາເຟ ຊີວະພາບແບບຍືນຍົງ (CSEC), ແລະ ການຂຽນແຜນທຸລະກິດ.






## ມີນາ

### ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນກາເຟຍິງເຂົ້າຮ່ວມງານເຄືອຂ່າຍ ການຕະລາດພາຍໃນ

ຊາວກະສິກອນກາເຟຍິງ 6 ທ່ານ ຈາກກຸ່ມຜູ້ຜະລິດກາເຟ ບ້ານ ຄູນໄຊ, ດາກຍອຍ, ດາກວໍ, ດາກເອີຍ ແລະ ດາກເດັນ ເຂົ້າຮ່ວມວາງສະແດງຜະລິດຕະພັນກາເຟຂອງກຸ່ມໃນງານບຸນຊ່ວງເຮືອປະເພນີເມືອງ ດາກຈຶງ ປະຈຳປີ 2025, ວັນທີ 29-30 ມີນາ 2025. ໃນງານດັ່ງກ່າວ, ທີມງານໄດ້ເສີບກາເຟສົດໃຫ້ຜູ້ມາຢ້ຽມຊົມຮ້ານວາງສະແດງຂອງຕົນຊີມ. ແລະໄດ້ຂາຍກາເຟທັງໝົດ 32 ຖົງ ປະກອບມີ: ຖົງ 200 ກຣາມ ຈຳນວນ 16 ຖົງ ແລະ ຖົງ 100 ກຣາມ ຈຳນວນ 16 ຖົງ ລວມເປັນເງິນທັງໝົດ 1,680,000 ກີບ.




## ເມສາ

### ກຸ່ມຜູ້ຜະລິດກາເຟພູດອຍດາກຈຶງໄດ້ຮັບເຄື່ອງສີກາເຟໃໝ່ ຊ່ວຍປັບປຸງການແປຮູບກາເຟ

ວັນທີ 23-24 ເມສາ 2025, ໂຄງການ SuPER WE ໄດ້ມອບເຄື່ອງສີກາເຟໃຫ້ແກ່ກຸ່ມຜູ້ຜະລິດກາເຟ ບ້ານດາກຣາຍ, ດາກວໍ, ຄູນໄຊ ແລະ ດາກເດັນ ເຊິ່ງເປັນກ້າວສຳຄັນໃນການຍົກລະດັບຕ່ອງໂສ້ມູນຄ່າ, ຂະບວນການແປຮູບ ແລະ ປັບປຸງຄຸນນະພາບກາເຟຂອງກຸ່ມ ໂດຍສະເພາະການສ້າງໂອກາດໃນການເຂົ້າເຖິງຕະຫຼາດທີ່ຫຼາກຫຼາຍຂຶ້ນ. ເຄື່ອງສີກາເຟໃໝ່ເຫຼົ່ານີ້ສາມາດສີກາເຟໝາກດຳ ແລະ ກາເຟໝາກຂາວ ພ້ອມທັງຊ່ວຍແຍກຂະໜາດແກ່ນກາເຟ ຊຶ່ງຊ່ວຍການແປຮູບກາເຟໝາກຂຽວ ແລະ ການຄັດຄຸນນະພາບສະດວກ, ໄວຂຶ້ນ ແລະ ໃຊ້ແຮງງານໜ້ອຍລົງ ຊຶ່ງວຽກເຫຼົ່ານີ້ສ່ວນຫຼາຍແມ່ນຄວາມຮັບຜິດຊອບຂອງຜູ້ຍິງ ແລະ ເດັກຍິງ. ນອກຈາກນີ້, ເຄື່ອງສີກາເຟຍັງສາມາດເພີ່ມລາຍຮັບໃຫ້ແກ່ກຸ່ມຜູ້ຜະລິດ ຈາກການໃຫ້ບໍລິການສີກາເຟໄດ້ອີກດ້ວຍ.





ພຶດສະພາ

## ຈັດງານເສວະນາກາເຟ ເພື່ອແລກປ່ຽນບົດຮຽນການພັດທະນາກາເຟ ໃຫ້ມີຄວາມຍືນຍົງ



ວັນທີ 29 ເມສາ 2025 ໂຄງການ SuPER WE Coffee ສຳເລັດຈັດກອງປະຊຸມເສວະນາກາເຟລາວ ຢູ່ທີ່ ໂຮງແຮມປາກຊ່ອງແດນງາມ ແຂວງຈຳປາສັກ ໂດຍການເປັນປະທານ ຂອງທ່ານ ບຸນສຳ ສີສັກ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ເຊກອງ ແລະ ທ່ານ ນາງ ໄພວັນ ຈັນງາຄຳ ຫົວໜ້າ ພະແນກແຜນງານອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ, ພ້ອມດ້ວຍບັນດາ ພະນັກງານອົງການແຄຣ໌, ແຂກຮັບເຊີນ ແລະ ຊາວສວນກາເຟ ກຸ່ມຜະລິດກາເຟພູດອຍດາກຈຶງ ເຂົ້າຮ່ວມ 122 ທ່ານ ເປັນຍິງ 54 ທ່ານ.

ຈຸດປະສົງຂອງກອງປະຊຸມເສວະນາກາເຟລາວແມ່ນເພື່ອແລກປ່ຽນ, ປຶກສາຫາລືກ່ຽວກັບສິ່ງທ້າທາຍ ແລະ ຄົ້ນຫາກາລະໂອກາດ ຂອງ ການ ຜະລິດ ກາ ເຟ ແບບ ຍືນ ຍົງ ແລະ ການສົ່ງເສີມບົດບາດ ຍິງ- ຊາຍ.



ໃນກອງປະຊຸມເສວະນາຄັ້ງນີ້ຕ່າງໜ້າຈາກຫຼາຍພາກສ່ວນຂອງລັດ, ອົງການແຄຣ໌, ສະມາຄົມກາເຟລາວ, ສະຫະກອນ, ຫົວໜ່ວຍທຸລະກິດ ແລະ ຊາວສວນກາເຟໄດ້ແລກປ່ຽນ ແລະ ປຶກສາຫາລືຫຼາຍຫົວຂໍ້ສຳຄັນເຊັ່ນ: ຍຸດທະສາດກາເຟລາວຮອດປີ 2025, ບົດຮຽນໂຄງການ SuPER WE Coffee ໃນການສົ່ງເສີມຂະແໜງກາເຟຕາມທິດສີຂຽວ, ຍົກສູງບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ, ລະບົບຕ່ອງໂສ້ມູນຄ່າກາເຟໃນແຕ່ລະພາກ, ການຜະລິດກາເຟທີ່ຍືນຍົງ ແລະ ຄວາມຮັບຜິດຊອບທາງດ້ານສັງຄົມໃນອຸດສາຫະກຳກາເຟ, ໂອກາດ ແລະ ສິ່ງທ້າທາຍກ່ຽວກັບຕ່ອງໂສ້ມູນຄ່າກາເຟພິເສດ.



ນອກຈາກນີ້ພວກເຮົາກໍ່ຍັງໄດ້ມີການຖ່າຍທອດສົດ ຜ່ານສື່ອອນລາຍຕ່າງໆ ສາມຊ່ອງທາງ ເຊັ່ນ: ເຟສບຸກ, ລິງອິນ ແລະ ຢູທູບ. ເຊິ່ງນີ້ເປັນວິການໃໝ່ ທີ່ໄດ້ຮັບຄວາມສົນໃຈຫຼາຍຈາກສັງຄົມ ແລະ ສາມາດດຶງດູດຜູ້ເຂົ້າຮ່ວມໄດ້ຊົມຈຳນວນ ຫຼາຍກ່ວາ 3,000 ຄົນ.




# ພຶດສະພາ



## ກອງປະຊຸມວິຊາການປະຈຳເດືອນ ພຶດສະພາ 2025

ກອງປະຊຸມວິຊາການປະເດືອນ ຈັດຂຶ້ນໃນວັນທີ 8 ພຶດສະພາ 2025 ຢູ່ທີ່ຫ້ອງ ຫານ ແຄ່ຣ໌ ເມືອງ ດາກຈຶງ ແຂວງ ເຊກອງ ໂດຍການເຂົ້າຮ່ວມຢ່າງພ້ອມພຽງ ຈາກຄູ່ຮ່ວມງານພາກລັດ ຂັ້ນ ແຂວງ ແລະ ຂັ້ນເມືອງ ຊຶ່ງມີທັງໝົດ 8 ທ່ານ, ຈາກພະແນກະສິກຳແຂວງ ເຊກອງ, ສະພັນແມ່ຍິງແຂວງ ເຊກອງ ແລະ ພະແນກ ອຸດສະຫຳ ແລະການຄ້າແຂວງ ເຊກອງ ລວມທັງຕ່າງໜ້າຈາກ 3 ໜ່ວຍງານຂັ້ນ ເມື່ອງ ກໍໄດ້ເຂົ້າຮ່ວມ.

ກອງປະຊຸມວິຊາການປະຈຳເດືອນນີ້ ແມ່ນສຳເລັດໄປດ້ວຍດີ ຊຶ່ງຜູ້ເຂົ້າຮ່ວມໄດ້ຮັບ ຟັງການລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳປະຈຳເດືອນ ມີນາ-ເມສາ 2025 ແລະ ປຶກສາຫາລືສິ່ງທ້າທາຍ, ຂໍ້ຄົງຄ້າງ ພາຍໃນເດືອນທີ່ຜ່ານມາ ແລະ ທິດທາງແຜນການປະຈຳເດືອນ ພຶດສະພາ.



# ພຶດສະພາ

## ການປຶກສາຫາລື ການສ້າງສະຫະກອນກາເຟພູດອຍດາກຈຶງ

ໃນວັນທີ 9 ພຶດສະພາ 2025, ໂຄງການ SuPER WE ໄດ້ຈັດກອງປະຊຸມປຶກສາຫາລືວຽກງານການຄຸ້ມຄອງບໍລິຫານກຸ່ມຜະລິດການເຟ ແລະ ຄົ້ນຄວ້າການສ້າງເປັນ ສະຫະກອນກາເຟພູດອຍດາກຈຶງ

ຢູ່ທີ່ຫ້ອງປະຊຸມ ຫ້ອງການປົກຄອງເມືອງ ດາກຈຶງ ແຂວງ ເຊກອງ ໂດຍການເຂົ້າຮ່ວມ ຂອງຄູ່ຮ່ວມງານພາກລັດ ຂັ້ນ ແຂວງ ແລະ ເມືອງ ຊຶ່ງມີທັງໝົດ 8 ທ່ານ, ຈາກພະແນກະສິກຳແຂວງ ເຊກອງ, ສະພັນແມ່ຍິງແຂວງ ເຊກອງ ແລະ ພະແນກອຸດສະຫຳ ແລະການຄ້າແຂວງ ເຊກອງ

ລວມທັງຕ່າງໜ້າຈາກ 3 ໜ່ວຍງານຂັ້ນເມືອງ ກໍໄດ້ເຂົ້າຮ່ວມ ລວມທັງຕາງໜ້າກຸ່ມຜະລິດກາເຟ ຈາກ 17 ສູນແປຮູບກາເຟ ໃນ 15 ບ້ານເປົ້າໝາຍ ລວມ ທັງໝົດ 44 ທ່ານ. ຜ່ານການປຶກສາຫາລື ແລະ ຄົ້ນຄວ້າ, ກອງປະຊຸມຕົກລົງເຫັນດີໃຫ້ດຳເນີນການກຽມທຸກເງື່ອນໄຂ ແລະ ເອກະສານທີ່ກ່ຽວຂ້ອງເພື່ອສ້າງສະຫະກອນກາເຟພູດອຍດາກຈຶງ.





## ພຶດສະພາ

## ຊາວສວນກາເຟຍິງເຂົ້າຮ່ວມວາງສະແດງຜະລິດຕະພັນກາເຟຂອງກຸ່ມໃນງານຕະຫຼາດນັດແຂວງ ເຊກອງ, ປະຈຳປີ 2025

ງານຕະຫຼາດນັດແຂວງ ເຊກອງ, ປະຈຳປີ 2025. ໄດ້ຈັດຂຶ້ນຢ່າງເປັນທາງການໃນວັນທີ 22-25 ພຶດສະພາ 2025 ທີ່ສູນການຄ້າແຂວງ ເຊກອງ. ມີຫຼາຍກວ່າ 45 ຮ້ານວາງສະແດງສິນຄ້າຈາກພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມ. ງານຕະຫຼາດນັດໄດ້ຮັບຄວາມສົນໃຈຈາກລັດຖະບານ ແລະ ເອກະຊົນໂດຍໄດ້ມີບັນດາການນຳພາກລັດຂັ້ນແຂວງ, ເມືອງ, ພາກທຸລະກິດ ແລະ ປະຊາຊົນທັງພາຍໃນແຂວງ ແລະ ບັນດາແຂວງໃກ້ຄຽງເຂົ້າຮວມຢ່າງກວ້າງຂວາງ. ການຈັດງານດັ່ງກ່າວໄດ້ສ້າງໂອກາດໃຫ້ຜູ້ບໍລິໂພກ, ຜູ້ຜະລິດສິນຄ້າ, ຜູ້ຈຳໜ່າຍ, ຜູ້ຊື້, ແລະ ຜູ້ນຳເຂົ້າ-ສົ່ງອອກສິນຄ້າ ໄດ້ພົບປະ ແລະ ຮູ້ຈັກສິນຄ້າພາຍໃນແຂວງເພີ່ມຫຼາຍຂຶ້ນ ຕະຫຼອດຮອດການສ້າງພາບລັກ ແລະ ສົ່ງເສີມຜະລິດຕະພັນລາວ.

ການເຂົ້າຮ່ວມວາງສະແດງຜະລິດຕະພັນກາເຟຂອງກຸ່ມ ໄດ້ສ້າງຄວາມເຂັ້ມແຂງ ແລະຄວາມໝັ້ນໃຈໃຫ້ແກ່ຊາວສວນກາເຟຍິງ ໂດຍສະເພາະຊາວສວນໄວໜຸ່ມຍິງ. ນາງ ຄານ ໄຊຍະອຽມ ກຸ່ມຊາວສວນກາເຟບ້ານດາກຢອຍໄດ້ກ່າວວ່າ: “ການເຂົ້າຮ່ວມວາງສະແດງຜະລິດຕະພັນຂອງກຸ່ມໃນງານຕະຫຼາດນັດຄັ້ງນີ້ ເຮັດໃຫ້ນ້ອງໄດ້ພົບປະ ແລະ ຮັບຟັງຄຳຄິດເຫັນຈາກແຂກພາກລັດ, ເອກະຊົນ, ແລະຜູ້ຊື້ ຊຶ່ງເຮັດໃຫ້ນ້ອງມີກຳລັງໃຈໃນການທີ່ຈະພັດທະນາປັບປຸງຄຸນນະພາບກາເຟໃນບ້ານຂອງນ້ອງໃຫ້ດີຂຶ້ນໄປຕື່ມ”.






# ພຶດສະພາ

## ກຸ່ມຜະລິດກາເຟພູດອຍດາກຈຶງ ເຂົ້າຮ່ວມງານປະກວດກາເຟໝາກຊ້ອມ ປະຈຳປີ 2025

ເພື່ອເປັນການສົ່ງເສີມພັດທະນາຜະລິດຕະພັນກາເຟ ຂອງກຸ່ມຜະລິດກາເຟພູດອຍດາກຈຶງ, ກຸ່ມຜະລິດກາເຟພູດອຍດາກຈຶງ ສືບຕໍ່ສົ່ງຕົວຢ່າງກາເຟໝາກຊ້ອມເຂົ້າຮ່ວມງານປະກວດກາເຟໝາກຊ້ອມ ປະຈຳປີ 2025. ໃນຄັ້ງນີ້, ກຸ່ມຜະລິດກາເຟ ໄດ້ສົ່ງຕົວຢ່າງກາເຟໝາກຊ້ອມ 3 ຕົວຢ່າງ ຈາກບ້ານ ຄູນໄຊ, ດາກເອີຍ, ແລະ ດາກຢອຍ ເຂົ້າຮ່ວມການແຂ່ງຂັນ. ໃນງານປະກາດຜົນການປະກວດກາເຟໝາກຊ້ອມ ວັນທີ 23 ພຶດສະພາ 2025, ຊຶ່ງຈັດຂຶ້ນຢູ່ທີໂຮງແຮມປາກເຊ, ນະຄອນປາກເຊ, ແຂວງ ຈຳປາສັກ, ກາເຟຂອງກຸ່ມຜະລິດກາເຟພູດອຍດາກຈຶງ ໄດ້ຮັບລາງວັນ ນະວັດຕະກຳການຜະລິດກາເຟ.

ລາງວັນດັ່ງກ່າວສະແດງໃຫ້ເຖິງການຍອມຮັບ ໃນຄຸນນະພາບກາເຟຂອງຊາວສວນກາເຟພູດອຍດາກຈຶງໃນເວທີລະດັບຊາດ. ນອກຈາກນີ້, ການເຂົ້າຮ່ວມງານປະກວດກະເຟໝາກຊ້ອມໄດ້ຍົກສູງຄວາມເຂົ້າໃຈ ຂອງຊາວສວນກ່ຽວກັບມາດຕະຖານຄຸນນະພາບຂອງກາເຟ, ຂະບວນການປະເມີນຄຸນນະພາບ, ເປີດໂອກາດໃຫ້ຊາວສວນກາເຟໄດ້ພົບປະ ແລະ ແລກປ່ຽນບົດຮຽນກັບຫຼາຍພາກສ່ວນໃນຂະແໜງກາເຟ. ໂຄງການ SuPER WE Coffee ຈະສືບຕໍ່ສົ່ງເສີມພັດທະນາຄຸນນະພາບກາເຟພູດອຍດາກຈຶງ ໃຫ້ສາມາດແຂ່ງຂັນໃນລະດັບຊາດ ແລະ ລະດັບສາກົນ.

ເຊິ່ງຜົນການປະເມີນໃຫ້ຮູ້ວ່າຕົວຢ່າງກາເຟອາຣາບິກ້າປະເພດ ການແປຮູບແບບລ້າງ ຈາກບ້ານຄູນໄຊ ໄດ້ຮັບ 82.25 ຄະແນນ, ເຊັ່ນດຽວກັນກັບບ້ານດາກເອີຍ ຕົວຢ່າງກາເຟອາຣາບິກ້າປະເພດການແປຮູບແບບລ້າງ ໄດ້ຮັບ 82.13 ຄະແນນ ແລະ ບ້ານດາກຢອຍສົ່ງຕົວຢ່າງກາເຟອາຣາບິກ້າ ປະເພດການແປຮູບແບບທຳມະຊາດ ໄດ້ຮັບ 81. 50 ຄະແນນ. ຜົນຄະແນນດັ່ງກ່າວໄດ້ສະທ້ອນເຖິງສັກກະຍະພາບຂອງແຫຼ່ງຜະລິດກາເຟໃນພື້ນທີ່ ທີ່ສາມາດພັດທະນາເຂົ້າສູ່ຕະຫຼາດກາເຟພິເສດໄດ້ໃນອະນາຄົດ.











## ສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວສວນກາເຟແມ່ຍິງ ໃນການເປັນຜູ້ນໍາ ແລະ ຜູ້ປະກອບການ.

ໂຄງການ SuPER WE ໄດ້ສົບທົບກັບ ສະຫະພັນແມ່ຍິງແຂວງສໍາເລັດຈັດຝຶກອົບຮົມກ່ຽວກັບການສ້າງຄວາມເຂັ້ມແຂງໃນການເປັນຜູ້ນໍາໃຫ້ແກ່ສະມາຊິກກຸ່ມ ຜະລິດການເຟ 2 ຊຸດ ຄັ້ງ ວັນທີ 25-26 ເມສາ ແລະ 6-7 ພຶດສະພາ 2025 ຢູ່ທີ່ເມືອງດາກຈຶງ ໂດຍມີຊາວສວນຍິງເຂົ້າຮ່ວມທັງໝົດ 45 ທ່ານ ຈາກ 15 ບ້ານເປົ້າໝາຍ. ການຝຶກອົບຮົມປະກອບດ້ວຍການຮຽນທິດສະດີ, ແລກປ່ຽນປະກອບຄໍາເຫັນຂອງບັນດານັກສໍາມະນາກອນ ແລະ ການເຮັດບົດຝຶກຫັດເປັນກຸ່ມຕ່າງໆ. ຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບບົດບາດ, ລັກສະນະ ແລະ ທັກສະການເປັນຜູ້ນໍາທີ່ດີ.



ໃນວັນທີ 28 ພຶດສະພາ 2025, ທີມງານອົງການແຄຣ໌ ສົບທົບກັບ ທີມງານຄູຝຶກຈາກ ສະຫະພັນແມ່ຍິງແຂວງ ເຊກອງ ຈັດກອງປະຊຸມ ຕິດຕາມ-ປະເມີນຫຼັງການຝຶກອົບຮົມ ການສ້າງຄວາມເຂັ້ມແຂງໃຫ້ກັບຊາວສວນຍິງ ດ້ານການເປັນຜູ້ນໍາ ໂດຍມີຊາວສວນຍິງເຂົ້າຮ່ວມທັງໝົດ 40 ຄົນ ຈາກ 15 ບ້ານເປົ້າໝາຍ. ຜ່ານກອງປະຊຸມຕິດຕາມ-ປະເມີນ ຄັ້ງນີ້ໄດ້ສະແດງໃຫ້ເຫັນວ່າ ຫຼາຍກວ່າ 80% ມີການປ່ຽນແປງໄປໃນທາງທີ່ດີຂຶ້ນ ຄື:

ດ້ານທັກສະການເປັນຜູ້ນໍາ ແລະການສື່ສານ ເຫັນວ່າຊາວສວນຍິງ ເມື່ອໄດ້ຮັບມອບໝາຍວຽກຈາກນາຍບ້ານ ຫຼືຫົວໜ້າກຸ່ມ ເພື່ອເຕົ້າໂຮມສະມາສິກ ຈັດກອງປະຊຸມພາຍກຸ່ມ ແມ່ນໄດ້ນໍາເອົາວຽກງານໄປຜັນຂະຫຍາຍ ແລະຊີ້ນໍາຊະມາສິໃນກຸ່ມຂອງເຂົາເຈົ້າໄດ້ເປັນຢ່າງດີເຊັ່ນ: ແບ່ງວຽກໃຫ້ສະມາສິກຸ່ມ, ການນໍາເອົາຄວາມຮູ້ມານໍາໃຊ້ໃນການບໍລິຫານຈັດການພາຍໃນກຸ່ມ, ການເຜີຍແຜ່ບົດຮຽນທີ່ໄດ້ຮຽນມາ, ການສຸກຍູ້ໃຫ້ສະມາຊິກຍິງຄົນອື່ນໃນກຸ່ມໄດ້ມີການປະກອບສ່ວນ ກ້າສະແດງອອກ ກ້າສະແດງຄວາມຄິດຄວາມເຫັນ, ໝັ້ນໃຈໃນການຕັດສິດໃຈ ແລະການວ່າງແຜນຮ່ວມກັນພາຍໃນກຸ່ມ, ໝັ້ນໃຈໃນການຊື່ສານ ແລະ ການນເຮັດວຽກຮ່ວມກັນພາຍໃນກຸ່ມ.



ສິ່ງທ້າທາຍທີ່ຍັງຕ້ອງໄດ້ພັດທະນາ, ສັງເກດເຫັນວ່າ ຫຼາຍກວ່າ 50% ຍັງເຮັດບໍໄດ້ດີເທົ່າທີ່ຄວນ ໃນທັກສະການເປັນຜູ້ເວົ້າຕໍ່ສາທາລະນະ, ແລະການວາງແຜນທຸລະກິດ ຊຶ່ງເປັນຫົວຂໍ້ທີ່ຊາວສວນ ໃຫ້ຄວາມສົນໃຈ ແລະມີຄວາມປະສົງຢາກຝຶກອົບຮົມເພີ່ມເຕີມໃນອານາຄົດຕໍໜ້າ.

switchasia GRANTS PROGRAMME
Haliéus COOPERATIVES FOR DEVELOPMENT
4FORM
International Cooperative Alliance Asia and Pacific
ITC International Training Centre
FAIRTRADE ITALIA



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານ ເສດຖະກິດໃຫ້ແກ່ແມ່ຍິງ

**ບັນທຶກ ແລະ ສຳພາດໂດຍ : ເກດເກສອນ ດວງມີນາ**



ນາງ ອ້ອມທະລາ ແສງທອງ

ສະມາຊິກກຸ່ມຜູ້ຜະລິດກາເຟຈາກບ້ານດາກກັງ, ສະແດງຄຳເຫັນວ່າ *"ງານເສວະນາກາເຟດັ່ງກ່າວ ໄດ້ເຮັດໃຫ້ຕົນເອງຮັບຮູ້ກ່ຽວກັບຄວາມໝາຍຄວາມສຳຄັນຂອງການຜະລິດກາເຟທີ່ມີຄຸນນະພາບ ແລະ ມີຄວາມຍືນຍົງໃນຂະແໜງການຜະລິດກາເຟລາວທີ່ເປັນມິດກັບສິ່ງແວດລ້ອມ ແລະ ທີ່ສຳຄັນຄືຮູ້ຈັກບັນດາເຄືອຂ່າຍຜູ້ຜະລິດ-ຈຳໜ່າຍກາເຟລາວ."* ພ້ອມດຽວກັນນັ້ນ, ຕົນເອງກໍມີຄວາມຮູ້ສຶກດີໃຈຫຼາຍທີ່ໄດ້ເຂົ້າຮ່ວມງານໃນຄັ້ງນີ້. ເຮັດໃຫ້ຕົນເອງໄດ້ຮຽນຮູ້ທັກສະການຜະລິດກາເຟທີ່ມີຄຸນນະພາບ ແລະ ປະສົບການໃໝ່ໆ ເພື່ອມາເຜີຍແຜ່ ແລະ ປັບໃຊ້ໃນຊຸມຊົນຂອງຕົນເອງ.



### ບົດຮຽນທີ່ຖອດຖອນໄດ້

ໄດ້ຮຽນຮູ້ວິທີການ ແລະຂັ້ນຕອນການກະກຽມ ກາເຟໝາກຊ້ອມ ເພື່ອສົ່ງເຂົ້າຮ່ວມການແຂ່ງຂັນ ວ່າມີຄວາມສຳຄັນແນວໃດ ແລະຕ້ອງໄດ້ເຮັດຫຍັງແດ່ກ່ອນສົ່ງຕົວຢ່າງໄປ ແລະທັງໄດ້ຮັບປະສົບການໃໝ່ຈາກການເຂົ້າຮ່ວມການປະກາດຜົນການແຂ່ງຂັນໃນວັນທີ 23 ພຶດສະພາ 2025 ຊຶ່ງໄດ້ສ້າງໂອກາດອັນດີໃນການພົບປະໂອລົມ ກັບຜູ້ເຂົ້າແຂ່ງຂັນທ່ານອື່ນໆ ແລະທັງພົບປະກັບຄູອາຈານຜູ້ທີ່ເປັນຄະນະກຳມະການອີກດ້ວຍ ທັງເປັນການສ້າງໂອກາດທາງ ການຊື້ຂາຍລະຫວ່າງຊາວສວນ ແລະກຸ່ມຜູ້ຜະລິດ-ຮັບຊື້ລາຍອື່ນໆ ຕື່ມອີກ.

### ຄວາມຮູ້ສຶກ

ນີ້ແມ່ນເທື່ອທຳອິດທີ່ນ້ອງໄດ້ມີໂອກາດໃນການ ສົ່ງຕົວຢ່າງ ກາເຟໝາກຊ້ອມ ຈາກສີມືການຜະລິດ ແລະແປຮູບຈາກນ້ອງເອງ ແລະນ້ອງເອງແມ່ນມີຄວາມຮູ້ສຶກດີໃຈຫຼາຍທີ່ໄດ້ເຂົ້າມາມີສ່ວນຮ່ວມໃນຄັ້ງນີ້. ຊຶ່ງນີ້ເປັນຈຸດເລີ່ມຕົ້ນທີ່ເຮັດໃຫ້ນ້ອງມີກຳລັງໃຈໃນການທີ່ຢາກພັດທະນາຕົນເອງ ແລະຄຸນນະພາບຂອງກາເຟຂອງນ້ອງໃຫ້ດີຂຶ້ນເລື້ອຍໆ.

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**

ຫົວໜ້າ ອົງການ

ເບີໂທ: (+856) 20 5564 2235

ອີເມລ: keoamphone.souvannaphoum@care.org

**ທ່ານ ຄຳປະເສີດ ເຈີດຈິງທາວ**

ຫົວໜ້າ ຫ້ອງການແຂວງ ເຊກອງ

ເບີໂທ: (+856) 20 7741 8956

ອີເມລ: khampaseuth.cheutchingthao@care.org

**ທ່ານ ລີໄຊ ໂພທິສັດ**

ຜູ້ປະສານງານດ້ານການສື່ສານ

ເບີໂທ: (+856) 20 7777 9501

ອີເມລ: Lyxay.phothisut@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org  www.careint.org.la  @careinlaos  CARE International in Lao PDR

care